ການຮູ້ໜັງສື ແລະ ການສຶກສາ

ຄວາມສາມາດໃນການເຂົ້າເຖິງໂຮງຮຽນ

ການຮຽນຈົບການສຶກສາລາຍສາມັນໃນແຕ່ລະຊັ້ນຮຽນແມ່ນໜຶ່ງໃນ 17 ຂໍ້ຕົກລົງໃນຫົວໂລກກ່ຽວກັບເປົ້າໝາຍການພັດທະນາ ແບບຍືນຍົງ (SDGs). ຜົນປະໂຫຍດຈາກການລົງທຶນໃສ່ດ້ານການສຶກສາແມ່ນບໍ່ມີຂີດຈຳກັດທາງດ້ານຜົນຕອບແທນຕໍ່ກັບບຸກຄົນ ເຊັ່ນ: ມີການສຶກສາທີ່ດີຂຶ້ນຈະພາໃຫ້ຄົນເຮົາສາມາດສ້າງລາຍຮັບ ແລະ ຄວາມໝັ້ນຄົງໄດ້ ແລະ ກໍ່ຍັງສົ່ງຜົນປະໂຫຍດໃຫ້ແກ່ສັງຄົມເຊັ່ນດຽວກັນ: ການສຶກສາປະກອບສ່ວນເຮັດໃຫ້ຄວາມທຸກຍາກຫຼຸດລົງ, ທາງດ້ານສາທາລະນະສຸກ ກໍໄດ້ຮັບການປັບປຸງໃຫ້ດີຂຶ້ນ ທັງເປັນການເພີ່ມຄວາມໄດ້ປຽບຂອງຄົນໃນສັງຄົມໂດຍລວມຂຶ້ນອີກດ້ວຍ. ການສຶກສາແມ່ນຕົວຂັບເຄື່ອນທີ່ສຳຄັນໃນການເຕີບໃຫຍ່ຂະຫຍາຍຕົວຂອງປະເທດ. ການເຂົ້າເຖິງໂຮງຮຽນ ແລະ ໂອກາດໃນການເຂົ້າເຖິງການສຶກສາຂັ້ນພື້ນຖານ ແມ່ນສິດທິຂອງມະນຸດ ສຳລັບເດັກນ້ອຍຕາມລະບຽບຂອງສາກົນວ່າດ້ວຍສິດທິມະນຸດ ໃນປີ 1948 ເຊິ່ງແມ່ນຈຸດສຳຄັນ ດ້ານການສຶກສາໃນຂັ້ນຕໍ່ໄປ ໃນຊີວິດຂອງພວກເຂົາ, ໃນຂະນະທີ່ບຸກຄົນທີ່ມີການສຶກສາດີ ກໍມີສ່ວນຮ່ວມໃນການນຳໃຊ້ຄວາມຮູ້ຄວາມສາມາດເຂົ້າໃນການຕອບແທນຕໍ່ສັງຄົມໂດຍລວມ.

ລັດຖະບານໄດ້ເນັ້ນໜັກໃສ່ທາງດ້ານການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດ ເຊິ່ງແມ່ນເຄື່ອງ ມືອັນສຳຄັນຕົ້ນຕໍ ເພື່ອການຫຼຸດຜ່ອນຄວາມທຸກຍາກ ແລະ ການພັດທະນາເສດຖະກິດ-ສັງຄົມ. ລັດຖະບານ ມີຄວາມພະຍາຍາມສູງໃນການປັບປຸງທາງດ້ານການສຶກສາຂັ້ນພື້ນຖານເພື່ອບັນລຸບັນດາເປົ້າໝາຍ ອີງການການສຶກສາເພື່ອທຸກຄົນ (EAF) ແລະ ເປົ້າໝາຍສະຫະສະວັດການພັດທະນາ (MDGs) ໃນທິດສະວັດທີ່ຜ່ານມາ ແລະ ສືບຕໍ່ໃຫ້ເຫັນເປັນຮູບປະທຳໄດ້ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 (NSEDP) ແລະ ກໍແມ່ນສ່ວນໜຶ່ງໃນຂໍ້ກຳນົດເປົ້າໝາຍຂອງການພັດທະນາແບບຍືນຍົງ (SDGs). ສປປ ລາວ ມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດຕໍ່ກັບບັນດາເປົ້າໝາຍເຫຼົ່ານັ້ນ. ອີງໃສ່ການສຳຫຼວດຜົນລະເມືອງ ແລະ ທີ່ຢູ່ອາໄສ ແຫ່ງຊາດ, ຈຳນວນໂຮງຮຽນຊັ້ນປະຖົມໄດ້ເພີ່ມຂຶ້ນຈາກ 3,747 ແຫ່ງ ໃນປີ 20 05 ມາເປັນ 6,427 ແຫ່ງ ໃນປີ 2015, ເຊິ່ງເພີ່ມຂຶ້ນຫຼາຍກວ່າ 70 ສ່ວນຮ້ອຍໃນໄລຍະ 10 ປີ. ເຊັ່ນດຽວກັນ, ຈຳນວນນັກຮຽນຊັ້ນປະຖົມກໍໄດ້ເພີ່ມຂຶ້ນຈາກ 589,265 ຄົນ ໃນປີ 2005 ມາເປັນ 814,7 19 ຄົນ ໃນປີ 2015 ແລະ ອັດຕາການເຂົ້າໂຮງຮຽນສຸດທິ ຊັ້ນປະຖົມກໍເພີ່ມຂຶ້ນຈາກ 66 ສ່ວນຮ້ອຍ ເປັນ 75 ສ່ວນຮ້ອຍ.

ໃນໄລຍະການສຳຫຼວດຜົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2015, ໂຮງຮຽນປະຖົມສຶກສາ ທີ່ມີຢູ່ແຕ່ລະປະເພດ ໃນຂັ້ນບ້ານແມ່ນໄດ້ຖືກຈັ ດນັບ. ໃນກໍລະນີ ທີ່ບໍ່ມີຂໍ້ມູນຊັດເຈນ ກ່ຽວກັບທີ່ຕັ້ງຂອງໂຮງຮຽນທີ່ຢູ່ພາຍໃນບ້ານ, ສູນກາງຄຸ້ມຄ້ອງ ບໍລິຫານຈະເປັນຜູ້ຕັດສິນ ແລະ ຢັ້ງຢືນແທນ. ການກຳນົດໄລຍະເວລາຈາກ ສະຖານທີ່ໃດໜຶ່ງ ຫາໂຮງຮຽ ນທີ່ຕັ້ງຢູ່ໃກ້ທີ່ສຸດ ແມ່ນຄຳນວນໂດຍການນຳໃຊ້ຂໍ້ມູນແຜນທີ່ GIS ໃນການເຂົ້າໄປຫາຖະໜົ ນຫົນທາງ, ປະເພດ ແລະ ເງື່ອນໄຂສະພາບຖະໜົນຫົນທາງ ແລະ ເນື້ອທີ່ອ້ອມຮອບ. ແຜນທີ່ດັ່ງກ່າວສະແດງໃຫ້ເຫັນ ພາບລວມຂອງຄວາມອາດສາມາດໃນການເຂົ້າເຖິງໂຮງຮຽນຊັ້ນປະຖົມສຶກສາໃນຂອບເຂດທົ່ວປະເທດ.

ພາບລວມຂໍ້ມູນແຜນທີ່ ປີ 2015

ແຜນທີ່ ງ1 ສະແດງເຖິງ ການແຈກຢາຍທາງດ້ານພູມີສາດຂອງບ້ານຕ່າງໆທີ່ມີໂຮງຮຽນຊັ້ນປະຖົມ,ບວກກັບການຄາດຄະເນທາງດ້ານໄລ ຍະເວລາຂອງການເດີນທາງໄປຫາໂຮງຮຽນທີ່ຕັ້ງຢູ່ໃກ້ທີ່ສຸດ. ຢູ່ໃນບ້ານຕ່າງໆທີ່ມີໂຮງຮຽນຊັ້ນປະຖົມ ປະມານ 76 ສ່ວນຮ້ອຍ ໃນຂອບເຂດທົ່ວປະເທດ. ຂໍ້ມູນດັ່ງກ່າວບໍ່ມີຄວາມແຕກຕ່າງກັນລະຫວ່າງເຂດຕົວເມືອງ ແລະ ຊົນນະບົດ. ຄວາມສາມາດໃນການເຂົ້າເຖິງໂຮງຮຽນແມ່ນຂຶ້ນຢູ່ກັບຫຼາຍປັດໄຈ ລວມທັງທີ່ຕັ້ງຂອງໂຮງຮຽນທີ່ຢູ່ໃນບ້ານ, ຄຸນນະພາບຂອງໂຄງລ່າງຟື້ນຖານໃນການເດີນທາງເຊັ່ນ: ຖະໜົນຫົນທາງ, ຂົວ ແລະ ເຮືອຂ້າມຝາກ ແລະ ສະພາບພູມສັນຖານຢູ່ແຕ່ລະທ້ອງຖິ່ນ. ໂຮງຮຽນແມ່ນກະແຈກກະຈາຍຢູ່ທົ່ວໄປໃນຂອບເຂດທົ່ວປະເທດ, ເຊິ່ງຖືວ່າຢັ່ງຢາຍຢູ່ຕາມເຂດທີ່ມີຄວາມໜາແໜ້ນຂອງພົນລະເມືອງ (ແຜນທີ່ ຂ1.1): ການແຈກຢາຍຢູ່ ຂອງໂຮງຮຽນສ່ວນໃຫຍ່ ແມ່ນມີຢູ່ໃນອ້ອມຮອບຕົວເມືອງ ແລະ ຢູ່ຕາມເຂດທີ່ມີຄວາມໜາແໜ້ນຂອງພົນລະເມືອງເຊັ່ນ: ນະຄອນຫຼວງວຽງຈັນ, ຕົວເມືອງເຫດສະບານຫຼັກຂອງແຂວງ ແລະ ຢູ່ຕາມເສັ້ນທາງສາຍຫຼັກ. ເຊິ່ງໝາຍຄວາມວ່າ ເດັກນ້ອຍທີ່ຢູ່ໃນເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ ຂ້ອນຂ້າງວ່າ ຕ້ອງໄດ້ໃຊ້ ເວລາໃນການເດີນທາງໄປຫາໂຮງຮຽນຫຼາຍກວ່າ ເດັກນ້ອຍທ້ອງໄສ່ຢູ່ໃນເຂດທີ່ສາມາດເຂົ້າເຖິງໂຮງຮຽນໄດ້, ເຊິ່ງສະທ້ອນໃຫ້ເຫັນເຖິງສິ່ງທີ່ທ້າທາຍສຳລັບລັດຖະບານໃນການຂະຫຍາຍການເຂົ້າເຖິງໂຮງ ຮຽນໃນເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ. ແນວໃດກໍຕາມ, ການເຂົ້າເຖິງໂຮງຮຽນທັງໝົດແມ່ນ ມີສູງ, ເຊັ່ນດຽວກັນກັບຢູ່ໃນເຂດຊົນນະບົດ ແລະ ບັນດາໂຮງຮຽນສ່ວນໃຫຍ່ແມ່ນສາມາດເຂົ້າເຖິງໄດ້ພາຍໃນໄລຍະເວລາໜຶ່ງຊົ່ວໂມງ.

ເດັກນ້ອຍນັກຮຽນຈາກບ້ານຕ່າງໆທີ່ຍັງບໍ່ທັນມີໂຮງຮຽນ ຈຳເປັນຕ້ອງເດີນທາງໄປຫາບ້ານທີ່ມີໂຮງຮຽນຕັ້ງຢູ່ໃກ້ຄຽງໃນເຂດດັ່ງກ່າວ. ແນວໃດກໍຕາມ, ໃນແຜນທີ່ ງ1 ສະແດງໃຫ້ເຫັນວ່າ ໝູ່ບ້ານທີ່ບໍ່ມີໂຮງຮຽນຕັ້ງຢູ່ນັ້ນ ໝາຍຄວາມວ່າ ເດັກນ້ອຍຈຳເປັນຕ້ອງເດີນທາງໄກກວ່າ ແລະ ໃຊ້ໂລຍະເວລາໃນການເດີນທາງເພື່ອໄປຫາບ້ານທີ່ໃກ້ຄຽງ . ບ້ານຕ່າງໆທີ່ບໍ່ມີໂຮງຮຽນແມ່ນພົບເຫັນຫຼາຍຢູ່ໃນເຂດທຸລະກັນດານຫ່າງໄກສອກຫຼີກ ເຊິ່ງສ່ວນໃຫຍ່ແມ່ນຢູ່ທາງພາກເໜືອ ໃນແຂວງຜົ້ງສາລີ ແລະ ຫຼວງນ້ຳທາ ລວມທັງແຂວງສະຫວັນນະເຂດ ແລະ ໝ້ອຍກວ່າໝູ່ ແມ່ນຢູ່ທາງພາກໃຕ້ໃນແຂວງສາລະວັນ ແລະ ແຂວງເຊກອງ. ຄວາມສາມາດໃນການເຂົ້າເຖິງໂຮງຮຽນແມ່ນມີຜົນກະທົບທີ່ສຳຄັນຕໍ່ກັບການເຂົ້າໂຮງຮຽນ, ອັດຕາການປະລະການຮຽນ ຫຼື ການລົງທະບຽນເຂົ້າໂຮງຮຽນທີ່ຊ້ຳກວ່າກຳນົດ ສິ່ງຜົນຕໍ່ປະສິດທິພາບຂອງການຮຽນທີ່ຕ່ຳລົງໃນຊ່ວງຊີວິດການຮຽນ.

ຮູບສະແດງ 3: ສ່ວນແບ່ງຂອງໝູ່ບ້ານທີ່ໃຊ້ເວລາສະເລ່ຍໃນການເດີນທາງໄປຫາໂຮງຮຽນປະຖົມທີ່ໃກ້ທີ່ສຸດ



ຮູບສະແດງ 4: ສ່ວນແບ່ງຂອງນັກຮຽນ (ອາຍຸ 6-11 ປີ) ທີ່ໃຊ້ເວລາສະເລ່ຍໃນການເດີນທາງໄປຫາໂຮງຮຽນປະຖົມທີ່ໃກ້ທີ່ສຸດ



ຮ1 ຄວາມສາມາດເຂົ້າເຖິງໂຮງຮຽນ



ຮ2.1 ການຮູ້ໜັງສືຂອງພົນລະເມືອງອາຍຸລະຫວ່າງ 15-64 ປີ



ການຮູ້ໜັງສື

ການຮູ້ໜັງສື ແມ່ນສິດທິຂັ້ນພື້ນຖານ ແລະ ທັກສະທີ່ສຳຄັນຂອງມະນຸດ ເຊິ່ງເຮັດໃຫ້ຄົນສາມາດບັນລຸເປົ້າໝາຍຂອງຕົນໄດ້ ພ້ອມທັງສາມາດດຳລົງຊີວິດຢູ່ໃນສັງຄົມໄດ້. ພົນລະເມືອງທີ່ບໍ່ໄດ້ຮັບການສຶກສາໃນຂັ້ນພື້ນຖານຈະມີຄວາມຫຍຸ້ງຍາກໃນການເຂົ້າເຖິງການບໍລິການຂັ້ນພື້ນຖານຕ່າງໆ ພ້ອມທັງການມີສິດມີສຽງທາງດ້ານການເມືອງ ແລະ ການຕັດສິນໃຈ. ໂດຍທົ່ວໄປແລ້ວ, ການບໍ່ຮູ້ໜັງສື ມັນຕິດພັນໂດຍກົງກັບຄວາມທຸກຍາກ, ການຖືກກີດກັນໃນດ້ານສັງຄົມ ແລະ ຮູບແບບອື່ນໆໃນການເລືອກປະຕິບັດ. ການຮູ້ໜັງສື ຖືວ່າກ່ຽວຂ້ອງໂດຍກົງກັບຄວາມອາດສາມາດດ້ານການຜະລິດ ເພື່ອສ້າງເສດຖະກິດຢູ່ໃນສັງຄົມ. ດ້ວຍເຫດນັ້ນ, ຂໍ້ເສຍປຽບຂອງການກີກໜັງສືນັ້ນ ບໍ່ພຽງແຕ່ເປັນຂໍ້ຈຳກັດສະເພາະບຸກຄົນເທົ່ານັ້ນ ແຕ່ຍັງມີຜົນກະທົບຕໍ່ຊຸມຊົນ ແລະ ສັງຄົມອີກດ້ວຍ.

ລັດຖະບານມີຄວາມພະຍາມໃນການປັບປຸງລະບົບການສຶກສາຂັ້ນພື້ນຖານ ເພື່ອເຮັດໃຫ້ການຮູ້ໜັງສືໄດ້ຮັບການປັບປຸງທີ່ດີຂຶ້ນ. ໂດຍລວມແລ້ວ, ອັດຕາການຮູ້ໜັງສືແມ່ນເພີ່ມຂຶ້ນຈາກ 73 ສ່ວນຮ້ອຍ ໃນປີ 2005 ເປັນ 85 ສ່ວນຮ້ອຍໃນປີ 2015. ເຖິງແມ່ນວ່າ, ການຮູ້ໜັງສືຈະເຫັນໄດ້ວ່າເພີ່ມຂຶ້ນກໍຕາມ ແຕ່ຢູ່ໃນຂັ້ນຫ້ອງຖິ່ນກໍຍັງມີຄວາມແຕກຕ່າງ ແລະ ຄວາມບໍ່ສະເໝີພາບກັນຫຼາຍທາງດ້ານການຮູ້ໜັງສື.

ໃນໄລຍະການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2015, ພົນລະເມືອງທີ່ມີອາຍຸຫຼາຍກວ່າ 5 ປີຂຶ້ນໄປ ແມ່ນໄດ້ໃຫ້ທົດລອງອ່ານຂໍ້ຄວາມຈາກຕົວຢ່າງສັ້ນໆ ແລະ ຖືກຖາມກ່ຽວກັບຄວາມສາມາດໃນການອ່ານ, ການຂຽນ ແລະ ຄວາມເຂົ້າໃຈ ຕໍ່ກັບພາສາລາວ ແລະ ພາສາອື່ນໆ.

ພາບລວມຂໍ້ມູນແຜນທີ່ ປີ 2015

ແຜນທີ່ ຮ2.1 ສະແດງເຖິງ ຮູບແບບການແຈກຢາຍຢູ່ຂອງການກີກໜັງສືໃນກຸ່ມພົນລະເມືອງ ກຸ່ມອາຍຸທີ່ສາມາດອອກແຮງງານຢູ່ໃນ ສປປ ລາວ ເຊິ່ງສະແດງໃຫ້ເຫັນດ້ວຍຂະໜາດຂອງເມັດຢູ່ໃນຮູບສະແດງ ພ້ອມທັງສະແດງອັດຕາການຮູ້ໜັງສື ໃນຮູບແບບເປັນເມັດສີ. ເຖິງແມ່ນວ່າ, ໃນເຂດທີ່ມີອັດຕາການຮູ້ໜັງສືຕ່ຳ ຈະແມ່ນເຂດທີ່ມີພົນລະເມືອງໆໃສ່ຢູ່ໜ້ອຍກໍຕາມ (ສົມທຽບແຜນທີ່ ຂ1.1), ຈຳນວນພົນລະເມືອງທີ່ກີກໜັງສືກໍມີຈຳນວນສູງ ຢູ່ໃນເຂດທີ່ມີຄວາມໜຍຸ້ງຍາກເຫຼົ່ານັ້ນ ເຊິ່ງເຫັນໄດ້ຢ່າງຊັດເຈນ ໃນເຂດທາງພາກເໜືອຂອງແຂວງຫຼວງນ້ຳທາ, ຜົ້ງສາລີ ແລະ ພາກໃຕ້ ຢູ່ແຂວງສະຫວັນນະເຂດ.

ແຜນທີ່ ຮ2.2 ສະແດງໃຫ້ເຫັນອັດຕາການຮູ້ໜັງສືຂອງພົນລະເມືອງໃນກຸ່ມອາຍຸ 15-24 ປີ ໃນແຕ່ລະຫ້ອງຖິ່ນ ແລະ ສະແດງໃຫ້ເຫັນການແຈກຢາຍຢູ່ຂອງໂຮງຮຽນ. ໂດຍລວມແລ້ວ, ຮູບສະແດງ ມີຄວາມຄ້າຍຄືກັນກັບການແຈກຢາຍຢູ່ຂອງພົນລະເມືອງໃນກຸ່ມອາຍຸທີ່ສາມາດອອກແຮງງານ ເຊິ່ງໃນບັນດາບ້ານທີ່ມີອັດຕາການຮູ້ໜັງສືທີ່ສູງຫຼາຍກວ່າ 90 ສ່ວນຮ້ອຍ ໂດຍສ່ວນໃຫຍ່ ແມ່ນຕັ້ງຢູ່ໃນເຂດທີ່ງພຽງ ແລະ ເຂດພາກເໜືອຂອງປະເທດ ລວມທັງເຂດພູດອຍທີ່ຢູ່ຕາມເຂດຕົ້ງກ່າວ. ຢູ່ແຂວງຫົວພັນ, ຊຽງຂວາງ, ຫຼວງພະບາງ ແລະ ໄຊຍະບູລີ,

ບ້ານສ່ວນໃຫຍ່ແມ່ນມີອັດຕາການຮູ້ໜັງສືສູງໃນກຸ່ມພົນລະເມືອງທີ່ເປັນໄວໜຸ່ມ ແລະ ກຸ່ມຄົນໄວກາງຄົນ. ຄວາມແຕກຕ່າງຂອງບາງຫ້ອງຖິ່ນເຫຼົ່ານີ້ ແມ່ນມີອັດຕາການຮູ້ໜັງສືທີ່ຕ່ຳຫຼາຍ ເຊິ່ງເຂດດັ່ງກ່າວ ມີພົນລະເມືອງໜ້ອຍກວ່າ 50 ສ່ວນຮ້ອຍ ຂອງກຸ່ມຄົນອາຍຸລະຫວ່າງ 15 ຫາ 24 ປີ ທີ່ສາມາດອ່ານ ອອກຂຽນໄດ້. ໃນເຂດດັ່ງກ່າວ ໂດຍສະເພາະພາກເໜືອຂອງແຂວງຫຼວງນ້ຳທາ, ຜົ້ງສາລີ ແລະ ບາງສ່ວນ ໃນພາກເໜືອຂອງແຂວງບໍ່ແກ້ວ ແລະ ທາງພາກຕາເວັນອອກ ສອງສ່ວນສາມຂອງແຂວງສະຫວັນນະເຂດ. ໃນເຂດເຫຼົ່ານີ້ ສ່ວນຫຼາຍແມ່ນເຂດທີ່ຢູ່ອາໄສຂອງກຸ່ມຊົນເຜົ່າ ເຊິ່ງມີຄວາມແຕກຕ່າງທາງດ້ານ ພາສາປາກເວົ້າ ກັບພາສາທີ່ນຳໃຊ້ເຂົ້າໃນການສຶກສອນຢູ່ໃນໂຮງຮຽນສາມັນ. ອັດຕາການຮູ້ໜັງສື ມີພົນກະທົບຢ່າງຊັດເຈນ ເນື່ອງຈາກພາສາພື້ນເມືອງ ທີ່ມີຄວາມແຕກຕ່າງກັນຢູ່ໃນກຸ່ມຊົນເຜົ່າ. ອັດຕາການຮູ້ໜັງສື ມີສູງຢູ່ໃນເຂດ ທີ່ມີພົນລະເມືອງທີ່ມີກຸ່ມພາສາປາກເວົ້າລາວ-ໄຕ (95 ສ່ວນຮ້ອຍ ຂອງເພດຊາຍ ແລະ 92 ສ່ວນຮ້ອຍ ສຳລັບເພດຍິງ ທີ່ຮູ້ໜັງສື), ໃນຂະນະທີ່ອັດຕາການຮູ້ໜັງສືແມ່ນມີ ຕ່ຳຢູ່ໃນເຂດຊົນນະບົດຫ່າງໄກສອກຫຼີກ ເຊິ່ງເປັນເຂດທີ່ຢູ່ອາໄສດັ້ງເດີມຂອງພົນລະເມືອງກຸ່ມຊົນເຜົ່າຈີນ-ທິເບດ (57 ສ່ວນຮ້ອຍ ຂອງເພດຊາຍ ແລະ 47 ສ່ວນຮ້ອຍ ສຳລັບເພດຍິງ ທີ່ຮູ້ໜັງສື) (ສົມທຽບແຜນທີ່ ส1 ແລະ ส2).

ອັດຕາການຮູ້ໜັງສືແມ່ນມີສູງ (ຫຼາຍກວ່າ 90 ສ່ວນຮ້ອຍ) ຢູ່ໃນກຸ່ມເພດຍິງ ແລະ ເພດຊາຍໃນເຂດຕົວເມືອງ. ໃນເຂດຊົນນະບົດ, ຄວາມແຕກຕ່າງລະຫວ່າງເພດ ມີທ່າອ່ຽງທີ່ເພີ່ມຂຶ້ນ ໂດຍສະເພາະຢູ່ໃນເຂດຊົນນະບົດທີ່ບໍ່ມີຫົນທາງເຂົ້າເຖິງໄດ້ຕະຫຼອດປີ, ມີພຽງ 62 ສ່ວນຮ້ອຍຂອງພົນລະເມືອງທີ່ສາມາດອ່ານ ແລະ ຂຽນໄດ້, ສົມທຽບໃສ່ 81 ສ່ວນຮ້ອຍ ຂອງພົນລະເມືອງທີ່ເປັນເພດຊາຍຢູ່ໃນເຂດດັ່ງກ່າວ.

ການປ່ຽນແປງໃນລະຫວ່າງ ປີ 2005 ຫາ 2015

ແນວໃດກໍຕາມ, ການຮູ້ໜັງສື ແມ່ນໄດ້ເພີ່ມຂຶ້ນໃນລະຫວ່າງ ປີ 2005 ແລະ 2015 ເຊິ່ງສ່ວນຫຼາຍ ອັດຕາການຮູ້ໜັງສືໃນທຸກເຂດ ແມ່ນໄດ້ເພີ່ມຂຶ້ນໃນລະດັບປານກາງ ຫາ ຕ່ຳ ເຊິ່ງສາມາດສັງເກດເຫັນ ໄດ້ເຖິງການປ່ຽນແປງທີ່ມີໃນທິດທາງບວກ. ການປ່ຽນແປງໃນທິດທາງ ທີ່ເພີ່ມຂຶ້ນນີ້ແມ່ນພົບເຫັນທັ້ງ ເພດຍິງ ແລະ ເພດຊາຍ ເຊິ່ງສະແດງອອກໃນຮູບແຜນທີ່ ງ2.3 ແລະ ງ2.4 ຕາມລຳດັບ.

ການເພີ່ມຂຶ້ນຢ່າງຈະແຈ້ງຂອງການຮູ້ໜັງສືນີ້ ຖືວ່າເຫັນໄດ້ໃນທຸກພາກຂອງປະເທດ ໂດຍສະເພາະ ໃນເຂດທຸລະກັນດານ ເຖິງແມ່ນວ່າ ຈະມີການປ່ຽນແປງທີ່ເຫັນໄດ້ຢ່າງຊັດເຈນວ່າອັດຕາການຮູ້ໜັງສືຫຼຸດລົງ ກໍຕາມ. ໃນບາງຫ້ອງຖິ່ນທີ່ຍັງບໍ່ທັນມີການປ່ຽນແປງຫຼາຍ ໂດຍສະເພາະ ໃນເຂດທີ່ຫ່າງໄກຈາກຕົວເມືອງຂອງປະເທດ ລຽບຕາມເຂດຊາຍແດນຕິດກັບປະເທດໄທ ແມ່ນມີອັດຕາການຮູ້ໜັງສືເພີ່ມຂຶ້ນໃນປີ 2005.







ສັດສ່ວນເພດທີ່ຮູ້ໜັງສື

ການຮູ້ໜັງສືໃນຂອງເພດຊາຍຢູ່ ສປປ ລາວ ໃນປີ 2015 (90 ສ່ວນຮ້ອຍ) ຍັງຄົງສູງກວ່າເພດຍິງ (80 ສ່ວນຮ້ອຍ) ຈາກການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2015. ແມ່ຍິງທີ່ມີການສຶກສາ ແລະ ທັກສະໃນການອ່ານອອກຂຽນໄດ້ ແມ່ນມີຜົນກະທົບທາງດ້ານບວກພວກເຂົາເຈົ້າເອງ, ຕໍ່ຄອບຄົວ ຂອງພວກເຂົາ ແລະ ຕໍ່ສັງຄົມອ້ອມຂ້າງໂດຍລວມນຳດ້ວຍ. ເດັກນ້ອຍທີ່ມີແມ່ ຜູ້ທີ່ຮູ້ໜັງສື ແມ່ນມີທ່າອ່ຽງ ໃນການໄດ້ຮັບໂພສະນາການທີ່ດີກວ່າ ແລະ ເດັກກໍມີໂອກາດໄດ້ຮັບການສຶກສາຫຼາຍກວ່າ. ດ້ວຍເຫດນັ້ນ, ລະດັບການສຶກສາ ແລະ ການຮູ້ໜັງສືຂອງແມ່ຍິງແມ່ນມີບົດບາດທີ່ສຳຄັນຫຼາຍໃນການຫຼຸດຜ່ອນຄວາມ ທຸກຍາກ.

ການນຳໃຊ້ຂໍ້ມູນຈາກການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2015 ແລະ 2005 ກ່ຽວກັບ ເພດ, ອາຍຸ ແລະ ການຮູ້ໜັງສືຂອງພົນລະເມືອງທີ່ມີອາຍຸ 5 ປີຂຶ້ນໄປ, ສັດສ່ວນເພດຂອງພົນລະເມືອງທີ່ຮູ້ໜັງສື ໃນກຸ່ມອາຍຸສະເພາະແມ່ນສາມາດຄົດໄລ່ໄດ້ໃນລະດັບການປ່ຽນແປງທີ່ເກີດຂຶ້ນຢູ່ໃນໄລຍະຂອງການສຳຫຼວດ ປີ 2015 ແລະ 2005.

ການເພີ່ມຂຶ້ນຂອງອັດຕາການຮູ້ໜັງສື ສາມາດສັງເກດໄດ້ທັງເພດຍິງ ແລະ ເພດຊາຍ ໃນໄລຍະທີ່ຜ່ານມາ ລະຫວ່າງ ປີ 2005 ຫາ 2015: ອັດຕາການຮູ້ໜັງສືຂອງເພດຍິງໄດ້ເພີ່ມຂຶ້ນປະມານ 16 ສ່ວນຮ້ອຍ ຕັ້ງແຕ່ປີ 2005, ໃນຂະນະທີ່ ການຮູ້ໜັງສືຂອງເພດຊາຍແມ່ນໄດ້ເພີ່ມຂຶ້ນປະມານ 7 ສ່ວນຮ້ອຍໃນໄລຍະນັ້ນ ເຊິ່ງຊີ້ໃຫ້ເຫັນ ຄວາມກ້າວໜ້າຂອງການຮູ້ໜັງສື ແລະ ການຫຼຸດຜ່ອນຊ່ອງວ່າງຂອງສັດສ່ວນດ້ານເພດ.

ສັດສ່ວນດ້ານເພດຂອງພົນລະເມືອງທີ່ຮູ້ໜັງສືລວມທັງທ່າອ່ຽງຂອງການປ່ຽນແປງ ແມ່ນມີຄວາມກ່ຽວຂ້ອງ ກັບ ທີ່ຕັ້ງທາງດ້ານພູມີສາດທີ່ແຕກຕ່າງກັນ ແລະ ຄວາມແຕກຕ່າງທາງດ້ານກຸ່ມພາສາປາກເວົ້າ ແລະ ລະດັບຂອງຄວາມທຸກຍາກ.

ພາບລວມຂໍ້ມູນແຜນທີ່ ປີ 2015

ແຜນທີ່ ຽ3.1 ສະແດງໃຫ້ເຫັນເຖິງ ອັດຕາສ່ວນຂອງການຮູ້ໜັງສືຂອງເພດຊາຍ ຕໍ່ ເພດຍິງ ໃນກຸ່ມພົນລະ ເມືອງທີ່ມີອາຍຸ 15 ຫາ 24 ປີ ໃນປີ 2015. ອັດຕາການຮູ້ໜັງສືຂອງເພດຊາຍແມ່ນມີສູງກວ່າ ຢູ່ໃນເຂດສີຟ້າ ຂະນະທີ່ສີແດງຊີ້ໃຫ້ເຫັນເຂດ ທີ່ມີອັດຕາການຮູ້ໜັງສືຂອງເພດຍິງສູງກວ່າ ເພດຊາຍ. ໂດຍລວມແລ້ວ, ຄວາມແຕກຕ່າງຂອງສັດສ່ວນເພດ ທີ່ມີອັດຕາການຮູ້ໜັງສື ສ່ວນຫຼາຍແມ່ນເພດຊາຍ ເຊິ່ງເປັນເລື່ອງທີ່ໜ້າ ແປກທີ່ມີຢູ່ຫຼາຍເຂດຢູ່ໃນ ສປປ ລາວ ມີສັດສ່ວນດ້ານເພດຂອງແມ່ຍິງທີ່ຮູ້ໜັງສືໃນລະດັບຕ່ຳ. ແນວໃດກໍຕາມ, ຄວາມບໍ່ດຸ່ນດ່ຽງດ້ານການຮູ້ໜັງສື ສ່ວນໃຫຍ່ແມ່ນພົບເຫັນຢູ່ໃນກຸ່ມເພດຊາຍ ໂດຍສະເພາະໃນເຂດຫ່າງໄກ ແລະ ຕິດກັບຊາຍແດນຂອງປະເທດຈີນ ໃນແຂວງຫຼວງນ້ຳທາ ແລະ ຜົ້ງສາລີ ລວມທັງ ແຂວງທີ່ຢູ່ທາງພາກ ໃຕ້ທີ່ມີຊາຍແດນໃກ້ກັບປະເທດຫວຽດນາມ. ເຂດດັ່ງກ່າວ ແມ່ນມີສັດສ່ວນ ທີ່ແຕກໂຕນກັນຫຼາຍໃນເພດຍິງ ທີ່ຮູ້ໜັງສື. (ຫຼາຍກວ່າ 150 ສ່ວນຮ້ອຍ). ຂະນະດຽວກັນ, ຢູ່ຫາງພາກຕາເວັນຕົກຂອງປະເທດ ໂດຍສະເພາະ ໃນເຂດຕົວເມືອງເຫັນວ່າ ຊ່ອງວ່າງຂອງເພດໃນການຮູ້ໜັງສືແມ່ນ ຫຼຸດລົງຫຼາຍ.

ພົນລະເມືອງໃນກຸ່ມອາຍຸ 25 - 64 ປີ, ຄວາມບໍ່ດຸ່ນດ່ຽງແມ່ນພົບຫຼາຍຢູ່ໃນກຸ່ມເພດຊາຍ ຍົກເວັ້ນ ຢູ່ໃນເຂດຕົວເມືອງ ແລະ ຊານເມືອງ, ການຮູ້ໜັງສືຂອງເພດຊາຍແມ່ນເຫັນໄດ້ຢ່າງຊັດເຈນ ວ່າມີຫຼາຍກວ່າ ເພດຍິງ ເຊິ່ງສະແດງອອກດ້ວຍ ສີຟ້າເຂັ້ມໃນແຜນທີ່ ຽ3.3. ຮູບແບບທີ່ພົບເຫັນຫຼາຍ ແມ່ນຢູ່ໃນເຂດຫ້ອງ ຖິ່ນຫາງພາກເໜືອ ແລະ ພາກໃຕ້ ເຊິ່ງເປັນເຂດ ທີ່ມີອັດຕາການຮູ້ໜັງສືຍັງຢູ່ໃນລະດັບທີ່ຕ່ຳ (ເບິ່ງແຜນທີ່ ຽ2.1). ຄວາມຄືບໜ້າໃນການຫຼຸດຊ່ອງວ່າງ ທາງດ້ານເພດ ໃນການຮູ້ໜັງສື ຊີ້ໃຫ້ເຫັນວ່າໄດ້ມີການເພີ່ມ ຂຶ້ນຢ່າງຊັດເຈນ ໃນເຂດ ສີແດງເຂັ້ມໃນແຜນທີ່ ຽ3.1 ລົມຫຽບໃສ່ ຽ3.3, ແຕ່ກໍຍັງເຫັນວ່າເຂດດັ່ງກ່າວ ຍັງບໍ່ແຕກຕ່າງຫຼາຍ.

ການປ່ຽນແປງໃນລະຫວ່າງ ປີ 2005 ຫາ 2015

ແຜນທີ່ ຽ3.2 ແລະ ຽ3.4 ສະແດງໃຫ້ເຫັນ ສັດສ່ວນດ້ານເພດຂອງພົນລະເມືອງທີ່ຮູ້ໜັງສືໃນກຸ່ມອາຍຸ 15-24 ປີ ແລະ ພົນລະເມືອງທີ່ຢູ່ໃນໄວທີ່ສາມາດອອກແຮງງານທີ່ມີອາຍຸລະຫວ່າງ 25 - 64 ປີ ແມ່ນມີ ການປ່ຽນແປງໃນໄລຍະ 10 ປີ ລະຫວ່າງ 2005 ແລະ 2015. ດັ່ງທີ່ໄດ້ສະແດງໃຫ້ເຫັນຢູ່ໃນແຜນທີ່ ທີ່ມີສີແດງ ສັດສ່ວນຂອງເພດຊາຍໄດ້ຫຼຸດລົງໃນຂອບເຂດທົ່ວປະເທດ ໂດຍສະເພາະ ຢູ່ໃນເຂດດັ່ງກ່າວກໍຍັງ ໄດ້ສະແດງໃຫ້ເຫັນຄວາມບໍ່ສົມດຸນກັນທາງດ້ານເພດ ຫຼາຍສົມຄວນ. ສິ່ງນີ້ ສະແດງໃຫ້ເຫັນ ຄວາມຄືບໜ້າ ໃນການຫຼຸດຊ່ອງວ່າງທາງດ້ານເພດໃນການຮູ້ໜັງສືແມ່ນເຮັດໄດ້ດີຫຼາຍ ໃນເຂດທີ່ມີຄວາມແຕກໂຕນກັນ.

ສົມທຽບໃສ່ພົນລະເມືອງໃນກຸ່ມໄວໜຸ່ມ, ຄວາມບໍ່ແຕກໂຕນທາງດ້ານເພດຂອງພົນລະເມືອງທີ່ຮູ້ໜັງສືແມ່ນ ໄດ້ຫຼຸດລົງ ຫຼາຍກວ່າ ກຸ່ມພົນລະເມືອງທີ່ມີອາຍຸສູງ. ເຊິ່ງສະແດງໃຫ້ເຫັນຄວາມຄືບໜ້າໃນການຫຼຸດຜ່ອນ ຊ່ອງວ່າງດ້ານເພດ ມີທ່າອ່ຽງຄ່ອຍໆ ຫຼຸດລົງໃນບາງເຂດ ເຊິ່ງເກີດຂຶ້ນຢູ່ໃນເຂດທີ່ມີຄວາມແຕກໂຕນໃນການ ຮູ້ໜັງສືລະຫວ່າງ ເພດຊາຍ ແລະ ເພດຍິງ. ແນວໃດກໍຕາມ ຄວາມແຕກໂຕນດ້ານເພດທີ່ເພີ່ມສູງຂຶ້ນນັ້ນ ສະແດງອອກຢູ່ໃນຈຸດສີຟ້າເຂັ້ມ ເຊິ່ງສາມາດຈຳແນກໃຫ້ເຫັນໄດ້ໃນເຂດທີ່ມີການຮູ້ໜັງສື ຢູ່ຕາມບ້ານທົ່ວໄປ ທີ່ມີຢູ່ໃນເຂດທຸລະກັນດານ ເຊິ່ງເປັນເຂດທີ່ຍັງໜ້າເປັນຫ່ວງ.

ຮ3.1 ສັດສ່ວນດ້ານເພດຂອງພົນລະເມືອງ ທີ່ຮູ້ໜັງສືໃນກຸ່ມອາຍຸ 15-24 ປີ



ຮ3.2 ການປ່ຽນແປງສັດສ່ວນດ້ານເພດ ຂອງພົນລະເມືອງທີ່ຮູ້ໜັງສືໃນກຸ່ມ ອາຍຸ 15-24 ປີ



ຮ3.3 ສັດສ່ວນດ້ານເພດຂອງພົນລະເມືອງ ທີ່ຮູ້ໜັງສືໃນກຸ່ມອາຍຸ 25-64 ປີ



ຮ3.4 ການປ່ຽນແປງສັດສ່ວນດ້ານເພດ ຂອງພົນລະເມືອງທີ່ຮູ້ໜັງສືໃນ ກຸ່ມອາຍຸ 25-64 ປີ



ຮູບ 4.1 ການລົງທະບຽນເຂົ້າຮຽນຊັ້ນປະຖົມ



ອັດຕາການລົງທະບຽນເຂົ້າຮຽນສຸດທິ

ການສຶກສາໃນຊັ້ນປະຖົມແມ່ນການສຶກສາພາກບັງຄັບໃນຫຼາຍໆປະເທດ, ແຕ່ການລົງທະບຽນເຂົ້າຮຽນຕົວຈິງແມ່ນມີຕ່ຳກວ່າ 100 ສ່ວນຮ້ອຍ. ອັດຕາການລົງທະບຽນເຂົ້າຮຽນສຸດທິວັດແທກໂດຍ ສັດສ່ວນຂອງເດັກທີ່ໄດ້ລົງທະບຽນເຂົ້າຮຽນໃນແຕ່ລະຊ່ວງອາຍຸ. ອັດຕາການລົງທະບຽນເຂົ້າຮຽນສຸດທິ ແມ່ນເຄື່ອງມືໜຶ່ງທີ່ສຳຄັນໃນການວັດແທກເຖິງຄວາມຄືບໜ້າຂອງການກຳນົດບັນດາເປົ້າໝາຍການພັດທະນາເຊັ່ນ: ເປົ້າໝາຍການພັດທະນາແບບຍືນຍົງ ຫຼື ບັນດາເປົ້າໝາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

ການສຶກສາໃນຊັ້ນປະຖົມ ແລະ ຊັ້ນມັດທະຍົມຕອນຕົ້ນ ຖືວ່າເປັນການສຶກສາພາກບັງຄັບ ຢູ່ໃນລະດັບສາກົນ ແລະ ຢູ່ໃນ ສປປ ລາວ. ຄ່າໃຊ້ຈ່າຍສຳລັບປຶ້ມແບບຮຽນ ແລະ ອຸປະກອນການຮຽນຕ່າງໆ ລວມເຖິງ ບັນຫາການຂາດແຄນຄູສອນ ຫຼື ການນຳໃຊ້ກຳລັງແຮງງານຢູ່ໃນເຮືອນ ແມ່ນບັນດາເຫດຜົນສຳຄັນ ທີ່ພາໃຫ້ເດັກນ້ອຍທຸກໆຄົນໃນເກນອາຍຸຮຽນໜັງສືບໍ່ສາມາດເຂົ້າໂຮງຮຽນໄດ້ ເຖິງແມ່ນວ່າຈະຢູ່ໃນໄລຍະເກນອາຍຸທີ່ຈະຕ້ອງເຂົ້າຮຽນໃນການສຶກສາພາກບັງຄັບກໍຕາມ.

ໃນໄລຍະການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ໃນປີ 2005 ແລະ 2015, ຂໍ້ມູນກ່ຽວກັບອາຍຸຂອງແຕ່ລະບຸກຄົນແມ່ນໄດ້ຖືກຈົດບັນລວມທັງ ຂໍ້ມູນຂອງແຕ່ລະຄົນທີ່ກຳລັງເຂົ້າຮຽນໃນຂະນະນັ້ນ ແລະ ຊັ້ນຮຽນໃດທີ່ເຂົາເຈົ້າກຳລັງຮຽນຢູ່. ເຊິ່ງມື້ນີ້ແມ່ນພື້ນຖານສຳລັບການຄຳນວນອັດຕາການລົງທະບຽນເຂົ້າຮຽນສຸດທິ ໃນຊັ້ນປະຖົມ, ຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ. ເຊັ່ນຕົວຢ່າງ: ອັດຕາການລົງທະບຽນເຂົ້າຮຽນສຸດທິຂອງຊັ້ນປະຖົມ ແມ່ນເດັກຢູ່ໃນເກນອາຍຸ 6-11 ປີ ເຊິ່ງກຳລັງເຂົ້າໂຮງຮຽນຢູ່ໃນບ້ານ ໃນໄລຍະເວລາຂອງການສຳຫຼວດ ຫານໃຫ້ ຈຳນວນເດັກທັງໝົດທີ່ມີອາຍຸ 6-11 ປີ ຢູ່ໃນບ້ານນັ້ນ.

ໂດຍລວມແລ້ວ, ອັດຕາການລົງທະບຽນເຂົ້າຮຽນສຸດທິຢູ່ຊັ້ນປະຖົມໃນ ສປປ ລາວ ແມ່ນໄດ້ເພີ່ມຂຶ້ນຈາກ 84 ສ່ວນຮ້ອຍ ໃນປີ 2005 ຂຶ້ນມາເປັນ 98.5 ສ່ວນຮ້ອຍ ໃນປີ 2015, ເຊິ່ງສູງກວ່າຄາດໝາຍຂອງລັດຖະບານທີ່ໄດ້ວາງໄວ້ຢູ່ທີ່ 98 ສ່ວນຮ້ອຍ. ໃນຂະນະທີ່ອັດຕາການລົງທະບຽນເຂົ້າຮຽນສຸດທິຂອງຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ແມ່ນຍັງຢູ່ໃນລະດັບຕ່ຳ, ແຕ່ກໍມີທິດທາງທີ່ດີຂຶ້ນ ສຳລັບການສຶກສາໃນຊັ້ນມັດທະຍົມ ແລະ ສາມາດບັນລຸເປົ້າໝາຍ ທີ່ໄດ້ວາງໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 7 (ປີ 2011).

ຮູບ 4.2 ການປ່ຽນແປງໃນການລົງທະບຽນ
ເຂົ້າຮຽນຊັ້ນປະຖົມ



ສະພາບລວມຂໍ້ມູນແຜນທີ່ ໃນປີ 2015

ແຜນທີ່ຕ່າງໆຢູ່ໃນໜ້ານີ້ ສະແດງໃຫ້ເຫັນເຖິງ ອັດຕາການລົງທະບຽນເຂົ້າຮຽນສຸດທິ ໃນປີ 2015 ຂອງ ຊັ້ນປະຖົມ, ຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ ລວມທັງ ຮູບແບບການປ່ຽນແປງໃນຊ່ວງໄລຍະ 10 ປີ ຂອງການສຳຫຼວດຜົນລະເມືອງ ແລະ ທີ່ຢູ່ອາໄສ. ອັດຕາການລົງທະບຽນເຂົ້າຮຽນແມ່ນຫຼຸດລົງຫຼາຍລະຫວ່າງ ຊັ້ນປະຖົມ ແລະ ຊັ້ນມັດທະຍົມຕອນຕົ້ນ ແລະ ຫຼຸດລົງຕື່ມອີກໃນຊັ້ນມັດທະຍົມຕອນປາຍ. ແນວໃດກໍຕາມ, ໃນລັກສະນະຮູບແບບນີ້ ແມ່ນຍັງມີຄວາມສອດຄ່ອງກັນໃນຂອບເຂດທົ່ວປະເທດ:ອັດຕາການລົງທະບຽນເຂົ້າຮຽນທີ່ຢູ່ໃນລະດັບຕ່ຳ ສະແດງອອກໃນເຂດຫ່າງໄກຫາງພາກເໜືອ ແລະ ເຂດພູດອຍ ທາງພາກຕາເວັນອອກສ່ຽງໃຕ້, ກົງກັນຂ້າມ ອັດຕາການລົງທະບຽນເຂົ້າຮຽນແມ່ນມີສູງຢູ່ໃນເຂດລຽບຕາມ ແຄມແມ່ນ້ຳຂອງ ແລະ ພົບຫຼາຍຢູ່ໃນເຂດທາງພາກເໜືອ. ອັດຕາການລົງທະບຽນເຂົ້າຮຽນສຸດທິໃນຊັ້ນ ປະຖົມຢູ່ໃນລະດັບຕ່ຳໂດຍສະເພາະໃນເຂດທາງພາກຕາເວັນອອກຂອງແຂວງສະຫວັນນະເຂດ ແລະ ພົບເຫັນໜ້ອຍເປັນບາງຈຸດ ໃນເຂດພາກກາງ ແລະ ເຂດທາງພາກເໜືອຂອງແຂວງຫຼວງນ້ຳທາ ແລະ ຜົ້ງສາລີ ຕາມລຳດັບ (ແຜນທີ່ ງ4.1). ໃນເຂດເຫຼົ່ານີ້ ສະແດງໃຫ້ເຫັນເຖິງ ອັດຕາການລົງທະບຽນເຂົ້າຮຽນສຸດທິ ທີ່ຢູ່ໃນລະດັບຕ່ຳຫຼາຍ ແລະ ໜ້ອຍກວ່າ 50 ສ່ວນຮ້ອຍ ເຖິງແມ່ນວ່າ ຄວາມສາມາດໃນການເຂົ້າເຖິງ ໂຮງຮຽນໃນເຂດເຫຼົ່ານັ້ນແມ່ນຂ້ອນຂ້າງດີກໍຕາມ (ເບິ່ງແຜນທີ່ ງ1).

ການລົງທະບຽນເຂົ້າຮຽນຢູ່ຊັ້ນມັດທະຍົມຕົ້ນ ແລະແມ່ນແຕ່ມັດທະຍົມປາຍ (ແຜນທີ່ ງ4.3 ແລະ ງ4.5) ເຫັນວ່າຍັງຕ່ຳຫຼາຍຢູ່ຫົວແຂວງພາກເໜືອ ເຊັ່ນ: ຫຼວງນ້ຳທາ, ບໍ່ແກ້ວ ແລະ ຜົ້ງສາລີ ແລະ ທາງຢູ່ພາກຕາເວັນອອກລຽບຕາມຊາຍແດນຕິດກັບປະເທດຫວຽດນາມ ລວມທັງເຄິ່ງໜຶ່ງທາງພາກຕາເວັນອອກ ແລະ ເຂດພາກໃຕ້ຂອງແຂວງສະຫວັນນະເຂດ, ສາລະວັນ, ເຊກອງ ແລະ ອັດຕະປື. ການລົງທະບຽນເຂົ້າຮຽນຢູ່ ໃນລະດັບຕ່ຳໂດຍສະເພາະ ຊັ້ນມັດທະຍົມຕອນຕົ້ນ ຢູ່ຕາມເຂດພູສູງຂອງແຂວງຄຳມ່ວນ ແລະ ບໍລິຄຳໄຊ. ກົງກັນຂ້າມ, ຢູ່ເຂດທາງພາກເໜືອ ພັດມີອັດຕາການລົງທະບຽນເຂົ້າຮຽນທີ່ຢູ່ໃນລະດັບສູງຫຼາຍ ໃນແຂວງ ຕ່າງໆເຊັ່ນ: ແຂວງຫົວພັນ, ຊຽງຂວາງ, ຫຼວງພະບາງ ແລະ ວຽງຈັນ ລວມທັງ ເຂດທາງພາກກາງຂອງ ສປປ ລາວ ເຊັ່ນ: ນະຄອນຫຼວງວຽງຈັນ ແລະ ແຂວງບໍລິຄຳໄຊ.

ການປ່ຽນແປງໃນລະຫວ່າງ ປີ 2005 ຫາ 2015

ຈຸດທີ່ເປັນສີແດງ-ຂຽວຢູ່ໃນແຜນທີ່ ສະແດງໃຫ້ເຫັນເຖິງ ການປ່ຽນແປງຂອງອັດຕາການລົງທະບຽນເຂົ້າ ຮຽນສຸດທິ ໃນໄລຍະ 10 ປີ ຂອງການສຳຫຼວດຜົນລະເມືອງ ແລະ ທີ່ຢູ່ອາໄສ: ຈຸດສີແດງ ສະແດງໃຫ້ເຫັນເຖິງ ການຫຼຸດລົງຂອງອັດຕາການລົງທະບຽນເຂົ້າຮຽນສຸດທິ, ໃນຂະນະທີ່ ຈຸດສີຂຽວສະແດງເຖິງ ການເພີ່ມ ຂຶ້ນຂອງອັດຕາການລົງທະບຽນເຂົ້າຮຽນສຸດທິ.

ໂດຍລວມແລ້ວ ສະພາບການປ່ຽນແປງທີ່ເຫັນໄດ້ຊັດເຈນ ແມ່ນການລົງທະບຽນເຂົ້າຮຽນໃນຊັ້ນປະຖົມ (ແຜນທີ່ ງ4.2), ການລົງທະບຽນເຂົ້າຮຽນໄດ້ເພີ່ມຂຶ້ນສູງ ຢູ່ໃນບັນດາບ້ານທີ່ຢູ່ໃນເຂດຫຸລະກັນດານ, ເຂດພູສູງທາງພາກເໜືອຂອງປະເທດ ລວມທັງເຂດພາກໃຕ້. ການສິ່ງເສີມດ້ານການສຶກສາໃນຊັ້ນປະຖົມຢູ່ ໃນເຂດດັ່ງກ່າວ ສະແດງໃຫ້ເຫັນເຖິງການເພີ່ມຂຶ້ນຢ່າງຊັດເຈນ. ໃນຫຼາຍເຂດພື້ງພຽງທີ່ສາມາດເຂົ້າເຖິງ ໄດ້ມີການປ່ຽນແປງໃນລະດັບປານກາງ ແລະ ໄດ້ປັບຂຶ້ນ-ລົງ ຕາມອັດຕາການລົງທະບຽນເຂົ້າຮຽນສຸດທິ. ໃນເຂດເຫຼົ່ານີ້ ຖືວ່າເປັນເຂດທີ່ມີອັດຕາການລົງທະບຽນເຂົ້າຮຽນສຸດທິ ທີ່ຂ້ອນຂ້າງສູງຢູ່ໃນປີ 2005.

ການສຶມທຽບລັກສະນະຮູບແບບການປ່ຽນແປງຂອງອັດຕາການລົງທະບຽນເຂົ້າຮຽນສຸດທິໃນຊັ້ນປະຖົມ ແລະ ຊັ້ນມັດທະຍົມຕອນຕົ້ນ (ແຜນທີ່ ງ4.2 ແລະ ງ4.4), ສະແດງອອກຄື: ອັດຕາການລົງທະບຽນເຂົ້າຮຽນ ສຸດທິໃນຊັ້ນປະຖົມຢູ່ຫຼາຍເຂດ ແມ່ນໄດ້ປ່ຽນແປງເລັກນ້ອຍ ຫຼື ບໍ່ໄດ້ປ່ຽນແປງເລີຍ ແລະ ອັດຕາການ ລົງທະບຽນເຂົ້າຮຽນສຸດທິໃນຊັ້ນມັດທະຍົມຕອນຕົ້ນ ແມ່ນໄດ້ເພີ່ມຂຶ້ນຫຼາຍ ເຊິ່ງສະທ້ອນໃຫ້ເຫັນເຖິງ ຜົນຂອງອັດຕາການລົງທະບຽນເຂົ້າຮຽນສຸດທິໃນຊັ້ນປະຖົມໃນໄລຍະຜ່ານມາແມ່ນໄດ້ຖືກປັບປຸງໃຫ້ດີຂຶ້ນ ເຊິ່ງມີຜົນຕໍ່ການລົງທະບຽນເຂົ້າຮຽນໃນຊັ້ນມັດທະຍົມໃນປະຈຸບັນ.

ຈ4.3 ການລິງທະບຽນເຂົ້າຮຽນ ຊັ້ນມັດທະຍົມຕົ້ນ



ຈ4.4 ການປ່ຽນແປງໃນການລິງທະບຽນ ເຂົ້າຮຽນຊັ້ນມັດທະຍົມຕົ້ນ



ຈ4.5 ການລິງທະບຽນເຂົ້າຮຽນ ຊັ້ນມັດທະຍົມປາຍ



ຈ4.6 ການປ່ຽນແປງໃນການລິງທະບຽນ ເຂົ້າຮຽນຊັ້ນມັດທະຍົມປາຍ



ສັດສ່ວນດ້ານເພດໃນການສຶກສາ

ເປົ້າໝາຍໃນທົ່ວໂລກ ດ້ານການສຶກສາເພື່ອທຸກຄົນ (ອີງການຍູເນສໂກ, ປີ 2015) ແລະ ເປົ້າໝາຍການພັດທະນາແບບຍືນຍົງ (ອີງການສະຫະປະຊາຊາດເພື່ອການພັດທະນາ) ຮຽກຮ້ອງໃຫ້ສາມາດເຂົ້າເຖິງດ້ານການສຶກສາຢ່າງເທົ່າທຽມກັນ ສຳລັບ ເດັກຊາຍ ແລະ ເດັກຍິງ. ຄວາມສະເໝີພາບທາງດ້ານເພດໃນດ້ານການສຶກສາ ແມ່ນມີຄວາມໂດດເດັ່ນ ແລະ ມາດຕະຖານທາງດ້ານ ວັດທະນະທຳໃນການໃຫ້ບູລິມະສິດເດັກຊາຍໄດ້ຮັບການສຶກສາ, ຂະນະທີ່ ເດັກຍິງແມ່ນມີບົດບາດ ຕາມຣີດຄອງປະເພນີໃນການຊ່ວຍເຮັດວຽກເຮືອນ ແລະ ກ້າວເຂົ້າສູ່ການເປັນແມ່ເຝື້ອລ້ຽງລູກ.

ເຖິງວ່າຈະມີຄວາມກ້າວໜ້າໃນການຫຼຸດຜ່ອນຊ່ອງຫວ່າງທາງດ້ານເພດກ່ຽວກັບການສຶກສາຢູ່ ສປປ ລາວ ກໍຕາມ, ຄວາມບໍ່ເທົ່າທຽມຍັງມີຢູ່ໃນທຸກລະດັບຊັ້ນຂອງການສຶກສາ ແລະ ມີຊ່ອງຫວ່າງຫຼາຍຂຶ້ນເລື້ອຍໆ ຢູ່ໃນການສຶກສາລະດັບສູງຂຶ້ນໄປອີກ.

ພາບລວມຂໍ້ມູນແຜນທີ່ ປີ 2015

ແຜນທີ່ ຈ5.1 ສະແດງໃຫ້ເຫັນເຖິງ ສັດສ່ວນຂອງນັກຮຽນເພດຊາຍຕໍ່ເພດຍິງໃນຊັ້ນປະຖົມ. ໂດຍທົ່ວໄປແລ້ວ ແມ່ນຈະພົບເຫັນສັດສ່ວນທາງດ້ານເພດຂອງນັກຮຽນສູງກວ່າ 100, ໝາຍຄວາມວ່າ ມີເດັກຊາຍທີ່ຢູ່ໃນໂຮງຮຽນຫຼາຍກວ່າເດັກຍິງ. ໂດຍສະເພາະ ບັນດາບ້ານທີ່ມີຊ່ອງຫວ່າງທາງດ້ານເພດສູງ ແມ່ນພົບເຫັນຫຼາຍຢູ່ແຂວງທາງພາກເໜືອ ທີ່ໃກ້ກັບເຂດຊາຍແດນປະເທດຈີນເຊັ່ນ: ແຂວງຜົ້ງສາລີ ແລະ ຫຼວງນ້ຳທາ ນອກນັ້ນກໍຍັງມີ ແຂວງ ສະຫວັນນະເຂດ ໂດຍສະເພາະແມ່ນ ທາງເຂດຊາຍແດນທີ່ຕິດກັບປະເທດຫວຽດນາມພ້ອມທັງຢູ່ເຂດທາງພາກໃຕ້ຂອງ ສປປ ລາວ.

ຄວາມບໍ່ເທົ່າທຽມທາງດ້ານເພດ ສະແດງໃຫ້ໄດ້ຊັດເຈນຫຼາຍຂຶ້ນ ຢູ່ໃນລະດັບການສຶກສາທີ່ສູງຂຶ້ນ. ຢູ່ໃນເຂດທຸລະກັນດານ, ມີນັກຮຽນສ່ວນໜ້ອຍເຂົ້າໂຮງຮຽນໃນຊັ້ນມັດທະຍົມ (ສະແດງອອກຢູ່ບໍລິເວນທີ່ເປັນສີຂາວ ໃນແຜນທີ່ ຈ5.3 ແລະ ຈ5.5). ນອກຈາກນັ້ນ, ຄວາມບໍ່ເທົ່າທຽມທາງດ້ານເພດຂອງເດັກຊາຍຢູ່ໃນໂຮງຮຽນຊັ້ນມັດທະຍົມແມ່ນໄດ້ສະແດງອອກຢ່າງຫຼວງຫຼາຍຢູ່ຕາມເຂດພູສູງ ແລະ ເຂດທຸລະກັນດານ ໃນເຂດຫ່າງໄກ, ເຊິ່ງເປັນເຂດທີ່ມີພົນລະເມືອງອາໄສຢູ່ໜາແໜ້ນ ແລະ ຢູ່ໃນເຂດຕົວເມືອງ ເຫັນວ່າສັດສ່ວນດ້ານເພດມີຄວາມເທົ່າທຽມກັນຫຼາຍກວ່າ.

ການປ່ຽນແປງໃນລະຫວ່າງ ປີ 2005 ຫາ 2015

ແຜນທີ່ ຈ5.2 ສະແດງໃຫ້ເຫັນເຖິງ ການປ່ຽນແປງຂອງອັດຕາສ່ວນຂອງເພດຊາຍຕໍ່ກັບເພດຍິງ ຢູ່ໃນໂຮງຮຽນຊັ້ນປະຖົມໃນໄລຍະ 10 ປີຜ່ານມາ. ໂດຍທົ່ວໄປແລ້ວ, ສັດສ່ວນດ້ານເພດແມ່ນໄດ້ຮັບການປັບປຸງ ແລະ ໄດ້ເອື້ອອຳນວຍຕໍ່ເດັກຍິງຢູ່ໃນຫຼາຍເຂດຂອງປະເທດ (ສະແດງອອກໂດຍ ຮູບສະແດງໃນການປ່ຽນແປງທີ່ຫຼຸດລົງຂອງສັດສ່ວນທາງດ້ານເພດ, ໃນຈຸດທີ່ເປັນສີແດງ), ໂດຍສະເພາະເຂດທີ່ມີສັດສ່ວນເອື້ອອຳນວຍໃຫ້ແກ່ເພດຊາຍຫຼາຍທີ່ສຸດ. ນີ້ສະແດງໃຫ້ເຫັນຄວາມກ້າວໜ້າໃນການຫັນໄປຕາມທິດທາງທີ່ເໝາະສົມ, ແຕ່ວ່າ ຍັງຈຳເປັນຕ້ອງໄດ້ປັບປຸງເພີ່ມຕື່ມອີກໃນອະນາຄົດ ໂດຍສະເພາະ ຢູ່ໃນເຂດທຸລະກັນດານທີ່ສຸດຂອງປະເທດ. ມັນເປັນສິ່ງທີ່ໜ້າສົນໃຈຫຼາຍ ທີ່ ຄວາມກ້າວໜ້າໃນການເຂົ້າໂຮງຮຽນຂອງເພດຍິງ ແມ່ນເຫັນໄດ້ວ່າເພີ່ມຂຶ້ນຢ່າງຊັດເຈນໃນລະດັບການສຶກສາຊັ້ນມັດທະຍົມ.



ຈ5.1 ສັດສ່ວນດ້ານເພດໃນໂຮງຮຽນຊັ້ນປະຖົມ



ຈ5.2 ການປ່ຽນແປງສັດສ່ວນດ້ານເພດ ໃນໂຮງຮຽນຊັ້ນປະຖົມ

ຮ5.3 ສັດສ່ວນດ້ານເພດໃນໂຮງຮຽນຊັ້ນມັດທະຍົມຕົ້ນ



ຮ5.4 ການປ່ຽນແປງສັດສ່ວນດ້ານເພດໃນໂຮງຮຽນຊັ້ນມັດທະຍົມຕົ້ນ



ຮ5.5 ສັດສ່ວນດ້ານເພດໃນໂຮງຮຽນຊັ້ນມັດທະຍົມປາຍ



ຮ5.6 ການປ່ຽນແປງສັດສ່ວນດ້ານເພດໃນໂຮງຮຽນຊັ້ນມັດທະຍົມປາຍ



ຈ.6.1 ເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນ



ເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ

ເດັກໄນເກນອາຍຸເຂົ້າໂຮງຮຽນ ແມ່ນອາດຈະບໍ່ໄດ້ເຂົ້າໂຮງຮຽນ ເນື່ອງມາຈາກຫຼາຍເຫດຜົນ: ໄນເຂດຫ່າງໄກສອກຫຼີກ ເຊິ່ງອາດຈະບໍ່ມີໂຮງຮຽນທີ່ຕັ້ງຢູ່ໃນເຂດນັ້ນ, ບາງຄົວເຮືອນກໍອາດຈະຕ້ອງການນຳໃຊ້ແຮງງານຂອງເດັກມາຊ່ວຍວຽກຄອບຄົວ, ເຊິ່ງອາດໃຫ້ຄວາມສຳຄັນກັບວຽກອື່ນຫຼາຍກວ່າການສຶກສາ ແລະ ເຫດຜົນອື່ນໆທີ່ມີຄວາມເປັນໄປໄດ້. ໂດຍທົ່ວໄປແລ້ວ, ເອີ້ນວ່າ ເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ (OOSC) ເຊິ່ງມາຈາກຄົວເຮືອນທີ່ມີຄວາມທຸກຍາກ ຢູ່ໃນເຂດຊົນນະບົດຫ່າງໄກສອກຫຼີກ. ເດັກນ້ອຍທີ່ຢູ່ໃນເຂດກຸ່ມພາສາປາກເວົ້າຂອງຊົນເຜົ່າທີ່ໃຊ້ພາສາ ແຕກຕ່າງກັບການສິດສອນຢູ່ໃນໂຮງຮຽນ ກໍມີຄວາມສ່ຽງເຊັ່ນດຽວກັນ. ເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ ເນື່ອງຈາກການຂາດເຂີນທາງດ້ານສະພາບແວດລ້ອມທີ່ເໝາະສົມດ້ານການສຶກສາ (ສິ່ງອຳນວຍຄວາມສະດວກໃນໂຮງຮຽນ, ຄູ-ອາຈານ), ຄວາມຫຍຸ້ງຍາກລຳບາກ ທີ່ເປັນອຸປະສັກໃນການໃຊ້ພາສາ, ຄ່າໃຊ້ຈ່າຍທີ່ຈຳເປັນໃນການຮຽນລວມທັງຄ່າໃຊ້ຈ່າຍທາງກົງ ແລະ ໂອກາດ, ເນື່ອງມາຈາກພາລະພາຍໃນຄອບຄົວ ຫຼື ຍ້ອນວ່າຍັງບໍ່ທັນເຫັນຄຸນຄ່າຂອງການສຶກສາຫຼາຍເທົ່າທີ່ຄວນ.

ພາບລວມຂໍ້ມູນແຜນທີ່ ປີ 2015

ໃນຫຼາຍທົດສະວັດທີ່ຜ່ານມາ, ເຖິງແມ່ນວ່າຈຳນວນໂຮງຮຽນ ແລະ ອັດຕາການເຂົ້າຮຽນສຸດທິ ຈະເພີ່ມຂຶ້ນຢູ່ໃນ ສປປ ລາວ ກໍຕາມ, ຍັງມີເດັກນ້ອຍຈຳນວນໜຶ່ງທີ່ຍັງບໍ່ທັນໄດ້ເຂົ້າໂຮງຮຽນຕາມປົກກະຕິ. ແຜນທີ່ ງ6.1 ສະແດງໃຫ້ເຫັນ ການແຈກຢາຍຢູ່ຂອງເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ ໃນອາຍຸລະຫວ່າງ 6 ຫາ 11 ປີ ເຊິ່ງແມ່ນກຸ່ມພົນລະເມືອງທີ່ຢູ່ໃນເກນອາຍຸເຂົ້າຮຽນຊັ້ນປະຖົມ.

ສັດສ່ວນຂອງເດັກໃນເກນອາຍຸເຂົ້າຮຽນໃນຊັ້ນປະຖົມ ສ່ວນໃຫຍ່ແມ່ນບໍ່ໄດ້ເຂົ້າໂຮງຮຽນຢູ່ໃນຫຼາຍໝູ່ບ້ານທາງພາກຕາເວັນຕົກສ່ຽງເໜືອ ແລະ ພາກເໜືອ ລວມທັງຢູ່ທາງເບື້ອງຕາເວັນອອກຂອງພາກໃຕ້, ເຊິ່ງສະແດງອອກໃນຈຸດທີ່ມີສີແດງໃນແຜນທີ່ ງ6.1. ສ່ວນໃຫຍ່ແມ່ນເຂດຫ່າງໄກສອກຫຼີກທຸລະກັນດານ ເຊິ່ງພົບເຫັນຫຼາຍໃນກຸ່ມພົນລະເມືອງທີ່ໃຊ້ພາສາຊົນເຜົ່າໃນການປາກເວົ້າ. ກຸ່ມພົນລະເມືອງທີ່ໃຊ້ພາສາ ຈີນ-ທິເບດ ເປັນພາສາປາກເວົ້າມີອັດຕາຂອງເດັກທີ່ບໍ່ໄດ້ເຂົ້າໂຮງຮຽນຫຼາຍກວ່າໝູ່, ຮອງລົງມາແມ່ນຢູ່ໃນກຸ່ມພາສາປາກເວົ້າມອນ-ຂະແມ ແລະ ໃນກຸ່ມຊົນເຜົ່າມົ້ງ (ສົມທຽບແຜນທີ່ ส2). ໃນດ້ານຈຳນວນຂໍ້ມູນຂອງເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ ສ່ວນຫຼາຍແມ່ນຢູ່ໃນແຂວງສະຫວັນນະເຂດ, ສາລະວັນ ແລະ ຈຳປາສັກ ເຊິ່ງເຫັນໄດ້ຢ່າງຊັດເຈນໃນຈຸດທີ່ມີຢູ່ໃນບ້ານໃຫຍ່ຕ່າງໆທີ່ມີອັດຕາ ແລະ ຈຳນວນເດັກທີ່ບໍ່ໄດ້ເຂົ້າໂຮງຮຽນສູງ.

ແຜນທີ່ ງ6.3 ສະແດງໃຫ້ເຫັນຊ່ອງວ່າງຂອງເພດໃນເດັກອາຍຸລະຫວ່າງ 6 ຫາ 11 ປີ ທີ່ບໍ່ໄດ້ເຂົ້າໂຮງຮຽນ ເຊິ່ງພົບເຫັນຢູ່ໃນເຂດທີ່ສາມາດເຂົ້າເຖິງ ແລະ ໃນເຂດທີ່ງຽງມີຫ່າງອ່ຽງທີ່ມີເດັກຊາຍບໍ່ໄດ້ເຂົ້າໂຮງຮຽນຫຼາຍກວ່າ ແລະ ຢູ່ໃນເຂດທຸກຍາກ (ເບິ່ງແຜນທີ່ ด1.1) ໂດຍສະເພາະ ໃນພາກຕາເວັນອອກສ່ຽງໃຕ້ ແລະ ພາກເໜືອຂອງ ສປປ ລາວ, ໂດຍທົ່ວໄປແມ່ນມີເດັກຍິງທີ່ບໍ່ໄດ້ເຂົ້າໂຮງຮຽນຫຼາຍກວ່າ ເຊິ່ງມັນສະທ້ອນໃຫ້ເຫັນເຖິງຮູບແບບຂອງຊ່ອງວ່າງດ້ານເພດໃນການສຶກສາຊັ້ນປະຖົມ (ແຜນທີ່ ງ5.1).

ການປ່ຽນແປງໃນລະຫວ່າງ ປີ 2005 ຫາ 2015

ແຜນທີ່ ງ6.2 ສະແດງໃຫ້ເຫັນອັດຕາການບໍ່ໄດ້ເຂົ້າໂຮງຮຽນຂອງເດັກທີ່ຢູ່ໃນກຸ່ມອາຍຸ 6 ຫາ 11 ປີ ໃນແຕ່ລະບ້ານທີ່ມີການປ່ຽນແປງຫຼາຍ ຢູ່ໃນທົດສະວັດທີ່ຜ່ານມາ. ຮູບແບບທີ່ມີຄວາມໂດດເດັ່ນແມ່ນອັດຕາຂອງການບໍ່ໄດ້ເຂົ້າໂຮງຮຽນຂອງເດັກໄດ້ຫຼຸດລົງ ເຊິ່ງພົບເຫັນໃນເຂດທາງພາກເໜືອ ແລະ ເບື້ອງຕາເວັນອອກທາງພາກໃຕ້ຂອງ ສປປ ລາວ ເຊິ່ງມີການປ່ຽນແປງເລັກນ້ອຍ ແລະ ໄດ້ປະປົນກັນຢູ່ຕາມເຂດທີ່ງພຽງຂອງປະເທດ. ເຂດທີ່ເຫັນວ່າຫຼຸດລົງຫຼາຍທີ່ສຸດ ແມ່ນເຂດທີ່ມີອັດຕາການບໍ່ໄດ້ເຂົ້າໂຮງຮຽນຂອງເດັກຢູ່ໃນລະດັບສູງໃນເມື່ອກ່ອນ ເຊິ່ງເປັນເຂດທີ່ຈຳເປັນຕ້ອງໄດ້ຮັບການ ປັບປຸງສູງທີ່ສຸດເຊັ່ນດຽວກັນ.



ງ6.2 ການປ່ຽນແປງດ້ານອັດຕາສ່ວນຂອງເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນ ໃນກຸ່ມອາຍຸ 6-11 ປີ



ງ6.3 ສັດສ່ວນດ້ານເພດຂອງເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນໃນກຸ່ມອາຍຸ 6-11 ປີ

ການເຂົ້າໂຮງຮຽນ

ການເຂົ້າໂຮງຮຽນ ຖືວ່າມີຄວາມຈຳເປັນທີ່ສຸດຢູ່ໄນ ສປປ ລາວ ໄນໂຮງຮຽນຊັ້ນປະຖົມ ແລະ ຊັ້ນມັດທະຍົມ. ເດັກທຸກຄົນທີ່ມີອາຍຸໃນລະຫວ່າງ 6 ຫາ 16 ປີແມ່ນຄວນຈະໄດ້ເຂົ້າໂຮງຮຽນ.

ໃນໄລຍະຂອງການລຳຫວດພົນລະເມືອງ ແລະ ທີ່ຢູ່ອາໄສ ທົ່ວປະເທດ, ພົນລະເມືອງທີ່ມີອາຍຸ 6 ປີຂຶ້ນໄປ ແມ່ນຖືກເກັບກຳຂໍ້ມູນກ່ຽວກັບ ການເຂົ້າໂຮງຮຽນໃນປະຈຸບັນ. ໂດຍລວມແລ້ວ, ສອງສ່ວນຫ້າ ຂອງເດັກທີ່ມີອາຍຸລະຫວ່າງ 6 ຫາ 16 ປີ ແມ່ນໄດ້ເຂົ້າໂຮງຮຽນ ໃນປີ 2015 ເຊິ່ງໄດ້ເພີ່ມຂຶ້ນຈາກ ສອງສ່ວນສາມ ໃນປີ 2005. ຫຼາຍກວ່າເຄິ່ງໜຶ່ງຂອງເດັກເຫຼົ່ານັ້ນແມ່ນບໍ່ໄດ້ເຂົ້າໂຮງຮຽນໃນປີ 2015 ເຊິ່ງຈຳນວນໜຶ່ງແມ່ນໄດ້ເຂົ້າໂຮງຮຽນໃນໄລຍະຜ່ານມາ, ແຕ່ກໍໄດ້ຢຸດເຊົາ ຫຼື ອອກໂຮງຮຽນກ່ອນທີ່ຈະ ຈົບການສຶກສາໃນພາກບັງຄັບ.

ພາບລວມຂໍ້ມູນແຜນທີ່ ປີ 2015

ແຜນທີ່ຕ່າງໆ ຢູ່ໃນໜ້ານີ້ ສະແດງໃຫ້ເຫັນ ອັດຕາການເຂົ້າໂຮງຮຽນຂອງພົນລະເມືອງໃນກຸ່ມອາຍຸ 6, 10 ແລະ 15 ປີ, ເຊິ່ງມີການປັບປ່ຽນບັນດາຕົວຊີ້ບອກເຫຼົ່ານີ້ ຕັ້ງແຕ່ປີ 2005 ເຊິ່ງສາມາດສັງເກດເຫັນ ໄດ້ໃນຫຼາຍຮູບແບບ.

ຈຸດທຳອິດ, ການເຂົ້າໂຮງຮຽນແມ່ນໄດ້ຫຼຸດລົງເລື້ອຍໆຕາມເກນອາຍຸ, ການເຂົ້າໂຮງຮຽນແມ່ນເລີ່ມຕົ້ນຢູ່ໃນ ລະດັບຕ່ຳໃນເກນອາຍຸ 6 ປີ, ອັດຕາການລົງທະບຽນເຂົ້າໂຮງຮຽນຂອງກຸ່ມອາຍຸ 10 ປີ ແມ່ນມີຫຼາຍຢູ່ໃນ ຫຼາຍເຂດຂອງ ສປປ ລາວ ແລະ ອັດຕາການລົງທະບຽນເຂົ້າໂຮງຮຽນໄດ້ຫຼຸດລົງໃນກຸ່ມເດັກທີ່ມີອາຍຸ 15 ປີ. ສະແດງໃຫ້ເຫັນວ່າ ເດັກຫຼາຍຄົນໄດ້ເຂົ້າໂຮງຮຽນຊ້າກວ່າເກນອາຍຸ. ໝາຍວ່າ ການເລີ່ມຕົ້ນເຂົ້າໂຮງຮຽນ ແມ່ນຫຼັງຈາກອາຍຸ 6 ປີ ແລະ ການອອກໂຮງຮຽນແມ່ນ ກ່ອນການຮຽນຈົບການສຶກສາໃນຊັ້ນມັດທະຍົມ.

ຈຸດທີສອງ, ຮູບແບບທີ່ມີຄວາມເດັ່ນ ແລະ ຊັດເຈນ: ເຂດທີ່ມີການລົງທະບຽນເຂົ້າໂຮງຮຽນຊ້າ ກວ່າກຳນົດແມ່ນຢູ່ໃນເຂດທີ່ຫ່າງໄກຫາງພາກເໜືອ ແລະ ພາກຕາເວັນຕົກສ່ຽງເໜືອ ລວມທັງ ເຂດຫາງພາກຕາເວັນອອກສ່ຽງໃຕ້ຂອງ ສປປ ລາວ. ການເຂົ້າໂຮງຮຽນຕອນອາຍຸ 10 ປີ ແມ່ນຖືວ່າຊ້າຫຼາຍ ຢູ່ໃນເຂດຫາງພາກຕາເວັນອອກຂອງແຂວງສະຫວັນນະເຂດ ເຊິ່ງເປັນໜຶ່ງໃນເຂດ ທີ່ມີຄວາມທຸກຍາກທີ່ສຸດ ພາຍຂອງປະເທດ (ເບິ່ງແຜນທີ່ ດ1.1). ການລົງທະບຽນເຂົ້າໂຮງຮຽນໃນກຸ່ມອາຍຸ 15 ປີ ແມ່ນຄ້າຍຄືກັບ ຮູບພາບຂອງການເຂົ້າໂຮງຮຽນທີ່ຊ້າກວ່າກຳນົດ– ໃນເຂດທີ່ມີເດັກເລີ່ມຕົ້ນເຂົ້າໂຮງຮຽນຊ້າ ແມ່ນມີຄວາມ ເປັນໄປໄດ້ສູງທີ່ພວກເຂົາເຈົ້າຈະ ອອກໂຮງຮຽນກ່ອນຮຽນຈົບ. ໃນເຂດດັ່ງກ່າວນັ້ນແມ່ນມີຜູ້ທີ່ທຸກຍາກ ຫຼາຍ ແລະ ສ່ວນໃຫຍ່ບໍ່ແມ່ນ ກຸ່ມພົນລະເມືອງທີ່ໃຊ້ພາສາລາວ ຫຼືອາໄສຢູ່ໃນເຂດດັ່ງກ່າວ.

ການປ່ຽນແປງໃນລະຫວ່າງ ປີ 2005 ຫາ 2015

ແຜນທີ່ ງ7.2, ງ7.4 ແລະ ງ7.6 ສະແດງເຖິງ ການປ່ຽນແປງຂອງອັດຕາການເຂົ້າຮຽນໃນເກນອາຍຸທີ່ກ່າວ ມາຂ້າງເທິງນັ້ນ ການປ່ຽນແປງໃນລະຫວ່າງ ປີ 2005 ຫາ 2015. ໂດຍລວມແລ້ວ, ຈຸດທີ່ມີສີຟ້າ ໝາຍເຖິງ ເຂດທີ່ມີອັດຕາການເຂົ້າໂຮງຮຽນເພີ່ມຂຶ້ນ, ນອກຈາກນີ້ ກໍມີບາງເຂດທີ່ມີອັດຕາການເຂົ້າໂຮງຮຽນຫຼຸດລົງ. ໃນໄລຍະຕົ້ນປີຮຽນ, ອັດຕາການເຂົ້າຮຽນແມ່ນໄດ້ເພີ່ມຂຶ້ນຫຼາຍໃນເຂດທີ່ມີຄວາມທຸກຍາກຂອງປະເທດ ແລະ ອັດຕາການເຂົ້າຮຽນຢູ່ໃນບາງເຂດຫາງພາກເໜືອກໍໄດ້ຫຼຸດລົງ. ໃນກຸ່ມເດັກອາຍຸ 10 ປີ ໂດຍລວມ ເຫັນວ່າຢູ່ໃນເຂດທີ່ມີຄວາມທຸຍຸ້ຍາກ ແລະ ທຸລະກັນດານຂອງປະເທດ ແຕ່ກໍມີຄວາມກ້າວໜ້າຫຼາຍທີ່ສຸດ ແລະ ສາມາດທຽບເທົ່າກັບເຂດອື່ນໆ, ແລະ ເຂດທີ່ຍັງມີອັດຕາການເຂົ້າໂຮງຮຽນຢູ່ໃນລະດັບສູງຄືເກົ່າ ແມ່ນພົບຫຼາຍຢູ່ໃນເຂດຫ່າງພຽງຂອງປະເທດ. ຮູບແບບທີ່ມີອັດຕາການເຂົ້າໂຮງຮຽນຂອງກຸ່ມອາຍຸ 15 ປີ ແມ່ນບໍ່ມີຄວາມໂດດເດັ່ນ ເຖິງແມ່ນວ່າ ຈະມີການເພີ່ມຂຶ້ນຢູ່ຫາງພາກຕາເວັນອອກຂອງແຂວງສະຫວັນ ນະເຂດ ແລະ ເພີ່ມຫຼາຍຢູ່ຫາງພາກເໜືອ. ການເຂົ້າໂຮງຮຽນກໍມີການຫຼຸດລົງ ຢູ່ຫາງພາກຕາເວັນຕົກຂອງ ແຂວງສາລະວັນ ແລະ ແຂວງເຊກອງ ລວມທັງຫຼາຍໆເຂດຫາງພາກຕາເວັນຕົກສ່ຽງເໜືອຂອງ ສປປ ລາວ.



ງ7.1 ການເຂົ້າໂຮງຮຽນຂອງເດັກນ້ອຍ ຕອນອາຍຸ 6 ປີ



ງ7.2 ການປ່ຽນແປງດ້ານອັດຕາການ ເຂົ້າໂຮງຮຽນຂອງເດັກນ້ອຍ ຕອນອາຍຸ 6 ປີ

ຮ7.3 ການເຂົ້າໂຮງຮຽນຂອງເດັກນ້ອຍ ຕອນອາຍຸ 10 ປີ



ຮ7.4 ການປ່ຽນແປງດ້ານອັດຕາການ ເຂົ້າໂຮງຮຽນຂອງເດັກນ້ອຍ ຕອນອາຍຸ 10 ປີ



ຮ7.5 ການເຂົ້າໂຮງຮຽນຂອງເດັກນ້ອຍ ຕອນອາຍຸ 15 ປີ



ຮ7.6 ການປ່ຽນແປງດ້ານອັດຕາການ ເຂົ້າໂຮງຮຽນຂອງເດັກນ້ອຍ ຕອນອາຍຸ 15 ປີ